**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສາຂາທະນາຄານແຫ່ງ ສປປ ລາວ
ພາກກາງ ແຂວງສະຫວັນນະເຂດ

ເລກທີ 78 /ທຫລ.ສຂ

ສະຫວັນນະເຂດ, ວັນທີ 24 JUL 2020

# ແຈ້ງການ

**ເຖິງ:** ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງຕ້ອງການດຳເນີນທຸລະກິດແລກປ່ຽນເງິນຕາ ໃນແຂວງສະຫວັນນະເຂດ, ແຂວງຄຳມ່ວນ ແລະ ແຂວງບໍລິຄຳໄຊ.

**ເລື່ອງ:** ການເປີດຮັບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ.

- ອີງຕາມກົດໝາຍ ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມຂໍ້ຕົກລົງວ່າດ້ວຍທຸລະກິດແລກປ່ຽນເງິນຕາ ສະບັບເລກທີ 393/ທຫລ, ລົງວັນທີ 02 ກໍລະກົດ 2020;

ສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ, ຂໍແຈ້ງມາຍັງບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງຕ້ອງການດຳເນີນທຸລະກິດແລກປ່ຽນເງິນຕາ ໃນແຂວງສະຫວັນນະເຂດ, ແຂວງຄຳມ່ວນ ແລະ ແຂວງບໍລິຄຳໄຊ ຊາບວ່າ ທະນາຄານແຫ່ງ ສປປ ລາວ ໄດ້ເລີ່ມຮັບໃບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາ ນັບແຕ່ເດືອນ ສິງຫາ 2020 ເປັນຕົ້ນໄປ, ຜູ້ທີ່ມີຄວາມສົນໃຈສາມາດເຂົ້າມາພົວພັນນຳສາຂາທະນາຄານແຫ່ງ ສປປ ລາວ ພາກກາງ ແຂວງສະຫວັນນະເຂດ.

ດັ່ງນັ້ນ, ຈິ່ງແຈ້ງມາຍັງ ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດແລກປ່ຽນເງິນຕາ ເພື່ອຊາບ.

**ວ່າການຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ**
**ພາກກາງ ແຂວງສະຫວັນນະເຂດ**

ວົງພະຈັນ ແສງສວັນ

Scanned with CamScanner